ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0038/24 ມທຫຊ
ນະຄອນຫຼວງວຽງຈັນ, ວັນທີ: 21 ກຸມພາ 2024

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1/2024, ທີ່ຈັດຂຶ້ນໃນວັນທີ 20 ກຸມພາ 2024

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມທຫຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1/2024 ທີ່ຈັດຂຶ້ນໃນວັນທີ 20 ກຸມພາ 2024 ເຊິ່ງມີວາລະຮັບຮອງເອົາມະຕິທີ່ສຳຄັນດັ່ງນີ້:

1. ຮັບຮອງຜົນການດຳເນີນການ ແລະ ລາຍງານປະຈຳປີ 2023 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ;
2. ອະນຸມັດຈັດສັນກຳໄລສຸດທິປະຈຳປີ 2023 ເປັນເງິນສຳຮອງຕາມກົດໝາຍ ແລະ ຈ່າຍເງິນປັນຜົນ 15 ກີບຕໍ່ຮຸ້ນ (ມູນຄ່ານິດນິດ 100 ກີບ) ກຳນົດວັນທີ 24 ພຶດສະພາ 2024 ເປັນມື້ຈ່າຍເງິນປັນຜົນ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາອະນຸມັດ;
3. ອະນຸມັດຈ່າຍຄ່າຕອບແທນປີ 2023 ສຳຫຼັບຜູ້ອຳນວຍການ (ສະມາຊິກສະພາບໍລິຫານ) ຂອງບໍລິສັດເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາອະນຸມັດ;
4. ອະນຸມັດແຜນການດຳເນີນການ, ເງິນເດືອນພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2024, ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາອະນຸມັດ;
5. ອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຜູ້ອຳນວຍການ (ສະມາຊິກສະພາບໍລິຫານ) ຂອງບໍລິສັດ ສຳຫຼັບປີ 2024, ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາອະນຸມັດ;
6. ພິຈາລະນາອະນຸມັດແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃຫ່ມ ທົດແທນຊຸດປັດຈຸບັນທີ່ຈະໝົດວາລະລົງ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາອະນຸມັດ;
7. ອະນຸມັດແຕ່ງຕັ້ງ PricewaterhouseCooper (Lao) Sole Company Limited ເປັນຜູ້ກວດສອບບັນຊີພາຍນອກ ສຳລັບປີ 2024 ແລະ ກຳນົດຄ່າຕອບແທນສຳລັບການກວດສອບ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາອະນຸມັດ;

8. ກຳນົດເອົາວັນທີ 06 ມີນາ 2024 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນຂອງບໍລິສັດ ເພື່ອກຳນົດສິດຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ໄດ້ຮັບເງິນປັນຜົນ ປະຈຳປີ 2023
9. ອະນຸມັດຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023, ວັນທີ 25 ເມສາ 2024 ເວລາ 09:30 ໂມງ, ທີ່ ໂຮງແຮມ ລາວພາຊ່າ, ຫ້ອງ May Hall ໂດຍມີວາລະປະຊຸມ ດັ່ງນີ້:

    ວາລະທີ 1 ພິຈາລະນາຮັບຮອງລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022;

    ວາລະທີ 2 ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2023;

    ວາລະທີ 3 ພິຈາລະນາຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2023;

    ວາລະທີ 4 ພິຈາລະນາອະນຸມັດການຈັດສັນກຳໄລສຸດທິ ປະຈຳປີ 2023 ແລະ ຈ່າຍເງິນປັນຜົນ;

    ວາລະທີ 5 ພິຈາລະນາອະນຸມັດຈ່າຍຄ່າຕອບແທນປີ 2023 ສຳລັບຜູ້ອຳນວຍການ (ສະມາຊິກສະພາບໍລິຫານ) ຂອງບໍລິສັດ;

    ວາລະທີ 6 ພິຈາລະນາອະນຸມັດ ແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງ ບໍລິສັດ ປະຈຳປີ 2024;

    ວາລະທີ 7 ພິຈາລະນາອະນຸມັດແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃຫ່ມ ທົດແທນຊຸດປັດຈຸບັນທີ່ຈະໝົດວາລະລົງ;

    ວາລະທີ 8 ພິຈາລະນາອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ (ສະມາຊິກສະພາບໍລິຫານ) ຂອງບໍລິສັດ ສຳຫຼັບປີ 2024;

    ວາລະທີ 9 ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບພາຍນອກ ແລະ ກຳນົດຄ່າຕອບແທນສຳຫຼັບການກວດສອບບັນຊີປະຈຳປີ 2024;

    ວາລະທີ 10 ພິຈາລະນາເລື່ອງອື່ນໆ (ຖ້າມີຜູ້ສະເໜີເພີ່ມເຕີ່ມ)

10. ເຫັນດີໃຫ້ແຕ່ງຕັ້ງ ທ່ານນາງ ພູວັນ ຈັນທະລັງສີ ແລະ ທ່ານນາງ ມະລິ ໄຊຍະວົງ ໃຫ້ເປັນຜູ້ຕ່າງໜ້າຂອງບໍລິສັດ ຊຶ່ງເປັນຜູ້ທີ່ມີຄວາມຮູ້ດ້ານກົດໝາຍ ເພື່ອປະກອບສ່ວນເຂົ້າເປັນຄະນະກຳມະການກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ ຕາມລະບຽບ ແລະ ກົດໝາຍທີ່ກຳນົດໄວ້ ສ່ວນການແຕ່ງຕັ້ງຕົວແທນຜູ້ຖືຮຸ້ນລາຍຍ່ອຍນັ້ນ ເຫັນດີມອບອຳນາດໃຫ້ປະທານສະພາບໍລິຫານ ແຕ່ງຕັ້ງໂດຍຄັດເລືອກເອົາຈາກຜູ້ຖືຮຸ້ນລາຍຍ່ອຍທີ່ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ທັ້ງນີ້ຖ້າຫາກມີຄວາມຈຳເປັນຕ້ອງປ່ຽນແປງຜູ້ຕາງໜ້າຂອງບໍລິສັດ ມອບສິດໃຫ້ຜູ້ອຳນວຍການເປັນຜູ້ເລືອກຜູ້ທີ່ມີຄຸນສົມບັດເໝາະສົມແທນໄດ້.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ

(ທ່ານ ນາງ ... ...)